**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ເລກທີ 786 /ກປຈ

ນະຄອນຫຼວງວຽງຈັນ, ວັນທີ 18 ມິຖຸນາ 2026

# ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມທີ່ສົນໃຈເຂົ້າຍື່ນຊອງປະມູນ ສໍາລັບການສະໜອງພາຫະນະເປັນປະເພດລົດເກັງໄຟຟ້າ EV 100% ຈໍານວນ 21 ຄັນ, ເກຍໂອໂຕ ເພື່ອປະກອບເປັນລົດປະຈໍາຕໍາແໜ່ງການນໍາຂັ້ນສູງ ປະເພດ III ແລະ IV. ກໍານົດເວລາໃນການມອບ-ຮັບລົດ ແມ່ນພາຍໃນ 90 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ວິທີການປະມູນແມ່ນນໍາໃຊ້ຮູບແບບການປະມູນເປີດກວ້າງແບບສອງຂັ້ນຕອນ ແລະ ລາຄາຕ້ອງສະເໜີເປັນສະກຸນເງິນກີບເທົ່ານັ້ນ:
   - **ຂັ້ນຕອນທີ 1**: ບໍລິສັດຕ້ອງຍື່ນຊອງເອກະສານສະເໜີທາງດ້ານມາດຖານເຕັກນິກ ແລະ ຄຸນວຸດທິຂອງບໍລິສັດ;
   - **ຂັ້ນຕອນທີ 2**: ຄະນະຮັບຜິດຊອບຈະໄດ້ແຈ້ງເຊີນເອົາບໍລິສັດຜູ້ປະມູນທີ່ຜ່ານການຄັດເລືອກດ້ານມາດຖານເຕັກນິກ ແລະ ຄຸນວຸດທິ ເພື່ອໃຫ້ມາຍື່ນຊອງເອກະສານປະມູນດ້ານການເງິນ (ລາຄາ);
4. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິທີ່ກໍານົດໄວ້ໃນເອກະສານການປະມູນສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 020 55424565 020 22934585, 020 58666656 ໃນໂມງລັດຖະການ;
5. ເອກະສານປະມູນເລີ່ມຂາຍແຕ່ວັນທີ 19 ມິຖຸນາ 2026 ຫາ ວັນທີ 24 ກໍລະກົດ 2026. ລາຄາຊອງປະມູນແມ່ນ **500,000**ກີບ/ຄັນ; ວິທີການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນໍາໃຊ້ເຂົ້າໃນວຽກງານການປະມູນ;
   - ທຸກບໍລິສັດທີ່ຊື້ຊອງປະມູນ ແມ່ນຕ້ອງໄດ້ເຂົ້າມານໍາສະເໜີປະເພດລົດ, ສະເປັກລົດ ແລະ ອື່ນໆທີ່ກ່ຽວກັບລົດທີ່ບໍລິສັດຈະນໍາເຂົ້າມາປະມູນ ກ່ອນມື້ຍື່ນເອກະສານສະເໜີທາງດ້ານມາດຖານເຕັກນິກ ແລະ ຄຸນວຸດທິຂອງບໍລິສັດ **10 ວັນ** ເພື່ອໃຫ້ຄະນະກໍາມະການໄດ້ຮັບຊາບຂໍ້ມູນເບື້ອງຕົ້ນເພື່ອເປັນບ່ອນອີງໃນການວິເຄາະ ແລະ ພິຈາລະນາຂັ້ນຕອນຕໍ່ໄປ. ສ່ວນວາລະການນໍາສະເໜີແມ່ນຈະແຈ້ງໃຫ້ບໍລິສັດໂດຍກົງຕາມຫຼັງ;
   - ບັນທັດຖານໃນການປະເມີນການຄັດເລືອກບໍລິສັດໃດທີ່ຜ່ານການຄັດເລືອກດ້ານມາດຖານເຕັກນິກ ແລະ ຄຸນວຸດທິ ຈຶ່ງຈະໄດ້ຮັບການແຈ້ງເຊີນໃຫ້ເຂົ້າມາຍື່ນຊອງເອກະສານປະມູນດ້ານການເງິນ (ລາຄາ);
6. ທຸກໆຊອງປະມູນດ້ານມາດຖານເຕັກນິກ ແລະ ຄຸນວຸດທິ ຕ້ອງສົ່ງກ່ອນເວລາ **09:00 ໂມງ ຂອງວັນທີ 24 ກໍລະກົດ 2026**, ແລະ ຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ; ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 1 (ຕຶກແຄມຂອງ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;

7. ທຸກຊອງປະມູນຊອງເອກະສານປະມູນດ້ານການເງິນ (ລາຄາ) ຕ້ອງສົ່ງກ່ອນເວລາ **09:00 ໂມງ** ຂອງວັນທີ **31 ກໍລະກົດ 2026**, ແລະ ຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ; ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 1 (ຕຶກແຄມຂອງ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;
8. ທຸກຊອງປະມູນຕ້ອງມີການຄ້ຳປະກັນ ດ້ວຍເງິນສົດ, ແຊັກ (ວີຊ່າ), ໜັງສືຄ້ຳປະກັນການປະມູນອອກໂດຍທະນາຄານ ບໍ່ໃຫ້ຫຼຸດສອງສ່ວນຮ້ອຍ (2%) ຂອງມູນຄ່າປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ກະຊວງການເງິນ
ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ອຸຕະແກ້ວ ແກ້ວດວງສົມ